**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ ເລກທີ: 0295 /ກລປ.

ນະຄອນຫຼວງວຽງຈັນ, ວັນທີ: 06 FEB 2023

**ເຖິງ: ຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງ ແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.**

**ເລື່ອງ: ການຈັດຕັ້ງປະຕິບັດຄຳສັ່ງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0160/ກປ, ລົງວັນທີ 19 ມັງກອນ 2022 ກ່ຽວກັບ ໂຈະການອອກອະນຸຍາດ ນຳເຂົ້າ ແລະ ສົ່ງຜ່ານ ໝູມີຊີວິດ ແລະ ຜະລິດຕະພັນໝູຈາກປະເທດໄທ ແລະ ປະເທດ ທີ່ມີການລະບາດ ຂອງເຊື້ອພະຍາດອະຫິວາໝູອາຟຣິກາ.**

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ(ສະບັບປັບປຸງ) ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນ ໄຫວ ຂອງກົມລ້ຽງສັດ ແລະ ການປະມົງສະບັບເລກທີ 0175/ກປ, ລົງວັນທີ 25 ມັງກອນ 2022.
- ອີງຕາມ ການລາຍງານການເກີດພະຍາດອະຫິວາໝູອາຟຣິກາໃນເຟດບຸກ ຂອງ ປະເທດໄທ ສະບັບ ວັນທີ 5 ມັງກອນ 2023 ທີ່ລະບຸໃນເວັບໄຊດ ຂອງ ອົງການສຸຂະພາບສັດສາກົນ(WOAH)

ກົມລ້ຽງສັດ ແລະ ການປະມົງ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ ໃນຊ່ວງຕົ້ນເດືອນມັງກອນ ປີ 2023 ທີ່ຜ່ານມາຮອດປະຈຸບັນ ໄດ້ມີການລາຍງານວ່າ ມີການພົບການລະບາດ ຂອງເຊື້ອພະຍາດອະຫິວາໝູອາຟຣິກາ ໃນບາງເຂດຂອງປະເທດໄທ ແລະ ປະເທດທີ່ມີການລະບາດ ໂດຍໄດ້ມີການແຈ້ງເປັນເອກະສານລາຍງານທາງເວບໄຊສ , ໂທລະພາບ ແລະ ສື່ສັງຄົມອອນລາຍ ຂອງປະເທດໃກ້ຄຽງ ແລະ ຜ່ານລະບົບການລາຍງານ ຂອງອົງການສຸຂະພາບສັດສາກົນ (WOAH) ຊຶ່ງສົ່ງຜົນເຮັດໃຫ້ມີຄວາມສ່ຽງ ທີ່ພະຍາດດັ່ງກ່າວຈະແຜ່ລະບາດເຂົ້າມາໃນ ສປປ ລາວ. ສະນັ້ນ, ເພື່ອປ້ອງກັນ, ສະກັດກັ້ນ ແລະ ຕ້ານ ການລະບາດຂອງພະຍາດອະຫິວາໝູອາຟຣິກາ ບໍ່ໃຫ້ເຂົ້າມາແຜ່ລະບາດ ຢູ່ ສປປ ລາວ ກົມລ້ຽງສັດ ແລະ ການປະມົງ ຈຶ່ງແຈ້ງມາຍັງຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ເພີ່ມທະວີການຈັດຕັ້ງປະຕິບັດຄຳສັ່ງສະບັບເລກທີ 0160/ກປ, ລົງວັນທີ 19 ມັງກອນ 2022 ເພື່ອຍົກລະດັບມາດຕະການປ້ອງກັນ ດັ່ງຕໍ່ໄປນີ້:

1. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ປະຕິບັດຄຳສັ່ງ ຂອງທ່ານລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການໂຈະການອະນຸຍາດ ນຳເຂົ້າ ແລະ ສົ່ງຜ່ານໝູມີຊີວິດ ແລະ ຜະລິດຕະພັນໝູ ຈາກຣາຊະອານາຈັກໄທ ແລະ ປະເທດທີ່ມີການລະບາດ ຂອງເຊື້ອພະຍາດອະຫິວາໝູອາຟຣິກາ ສະບັບເລກທີ 0160/ກປ, ລົງວັນທີ 19 ມັງກອນ 2022 ຢ່າງເຂັ້ມງວດ;
2. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ຊີ້ນຳເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານຊາຍແດນສາກົນ, ສະໜາມບິນສາກົນ, ດ່ານທ່າບົກທ່ານາແລ້ງ, ດ່ານຊາຍແດນທ້ອງຖິ່ນ ແລະ ດ່ານຊາຍແດນປະເພນີ ເພີ່ມທະວີຕິດຕາມ ແລະ ກວດກາ ການນຳເຂົ້າ ຫຼື ສົ່ງ

ຜ່ານໝູມີຊີວິດ, ຜະລິດຕະພັນຫມູ ທຸກຊະນິດ ລວມທັງຜະລິດຕະພັນຫມູປຸງແຕ່ງເບື້ອງຕົ້ນ ຈາກປະເທດໄທ ຫຼື ຈາກປະເທດທີ່ມີການລະບາດຂອງເຊື້ອພະຍາດອະຫິວາຫມູອາຟຣິກາ ເຂົ້າມາ ສປປ ລາວ. ໃນກໍລະນີກວດພົບເຫັນ ໃຫ້ຍຶດ, ທຳລາຍ ແລະ ດຳເນີນການ ຕາມກົດຫມາຍ ແລະ ລະບຽບການ ຢ່າງເຂັ້ມງວດ;

3. ໃນກໍລະນີມີເຈົ້າຫນ້າທີ່ສັດຕະວະແພດປະຈຳດ່ານ ພົບເຫັນຜູ້ລະເມີດ ຫຼື ກະທຳຜິດ ທີ່ຍັງມີການນຳເອົາຫມູມີຊີວິດ ແລະ ຜະລິດຕະພັນໝູປຸງແຕ່ງເບື້ອງຕົ້ນຈາກ ຫຼື ຜ່ານປະເທດໄທ ແລະ ປະເທດທີ່ມີການລະບາດ ເຂົ້າມາໃນດ່ານ ຫຼື ຜ່ານດ່ານ ຕ້ອງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ປະຕິບັດວິໄນ ແລະ ດຳເນີນຄະດີ ຕາມກົດໝາຍ ແລະ ລະບຽບການ ພ້ອມທັງ ລາຍງານໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ຫຼື ນະຄອນຫຼວງວຽງຈັນ ແລະ ກົມລ້ຽງສັດ ແລະ ການປະມົງຮັບຊາບ ໂດຍດ່ວນ;
4. ສຳລັບຂອງກາງທີ່ກວດຍຶດໄດ້ຈາກການລັກລອບນຳເຂົ້າ ຫຼື ສົ່ງຜ່ານ ໃຫ້ນຳໄປທຳລາຍຖິ້ມດ້ວຍການ ເຜົາ ຫຼື ຝັງ ຕາມຫຼັກວິຊາການ. ສ່ວນຜູ້ທີ່ລະເມີດ ໃຫ້ເຮັດບົດບັນທຶກກ່າວເຕືອນ, ປັບໃຫມ ຫຼື ດຳເນີນຄະດີ ຕາມກົດ ຫມາຍ ແລະ ລະບຽບການ;
5. ໃຫ້ ຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ອອກຄຳແນະນຳດ້ານເຕັກນິກວິຊາການ ເພື່ອຜັນຂະຫຍາຍແຈ້ງການ ສະບັບນີ້ ເປັນອັນລະອຽດ ພ້ອມທັງ ເພີ່ມທະວີເປັນເຈົ້າການເຝົ້າລະວັງ, ປ້ອງກັນ ແລະ ຄວບຄຸມພະຍາດອະຫິວາຫມູອາຟຣິກາ ຢູ່ແຕ່ລະທ້ອງຖິ່ນໃຫ້ເຂັ້ມງວດ; ກໍລະນີພົບເຫັນ ໝູເຈັບ ຫຼື ຕາຍຍ້ອນພະຍາດດັ່ງກ່າວ ໃຫ້ນຳໃຊ້ມາດຕະການທາງດ້ານເຕັກນິກ ຕາມຫຼັກວິຊາການຢ່າງຮີບດ່ວນ;
6. ມອບໃຫ້ ຂະແໜງລ້ຽງສັດ ແລະ ການປະມົງແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ ໃຫ້ໄດ້ຮັບຜົນດີ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານກົມລ້ຽງສັດ ແລະ ການປະມົງ ເພື່ອພິຈາລະນາແກ້ໄຂໃຫ້ທັນກັບສະພາບການ;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າກົມ**

ກະຊວງກະສິກຳແລະປ່າໄມ້ ກົມລ້ຽງສັດແລະການປະມົງ

**ນ. ວິໄລພອນ ວໍລະພົມ**

ບ່ອນນຳສົ່ງ:

1. ທ່ານລັດຖະມົນຕີກະຊວງກປ 1 ສະບັບ (ເພື່ອລາຍງານ)
2. ຫ້ອງການກະຊວງກປ 1 ສະບັບ (ເພື່ອລາຍງານ)
3. ຫົວໜ້າພະແນກ ກປ ແຂວງ, ນະຄອນຫຼວງ 1 ສະບັບ, (ເພື່ອຊີ້ນຳ ແລະ ລາຍງານ)
4. ຄະນະກົມ, ພະແນກ, ສູນ ອ້ອມຂ້າງກົມ 1 ສະບັບ.
5. ເກັບມ້ຽນ 1 ສະບັບ.